**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 32593/ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2023

# ຂໍ້ຕົກລົງ
# ວ່າດ້ວຍປ້າຍສະຖານີລົດໄຟ

- ອີງຕາມ ກົດໝາຍ ວ່າດ້ວຍການລົດໄຟ ສະບັບເລກທີ 62/ສພຊ, ລົງວັນທີ 17 ທັນວາ 2018;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມທາງລົດໄຟ ສະບັບເລກທີ 31119/ກທຟ, ລົງວັນທີ 06 ພະຈິກ 2023.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ປ້າຍສະຖານີລົດໄຟ ເພື່ອ ຄຸ້ມຄອງ, ຕິດຕາມ ກວດກາ ປະເພດ, ຊະນິດ, ຂະໜາດ, ສີພື້ນ, ໂຕອັກສອນ, ຄວາມຮຸ່ງແຈ້ງ ແລະ ຊື່ ຂອງປ້າຍສະຖານີລົດໄຟ ໃຫ້ຖືກຕ້ອງ, ເປັນເອກະພາບ ແລະ ມີລັກສະນະຊາດ ແນໃສ່ຮັບປະກັນ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ.

**ມາດຕາ 2 ປ້າຍສະຖານີລົດໄຟ**

ປ້າຍສະຖານີລົດໄຟ ແມ່ນ ຜະລິດຕະພັນທີ່ສ້າງຂຶ້ນດ້ວຍ ຕົວໜັງສື, ຕົວເລກ, ຮູບພາບ, ຮູບແຕ້ມ, ການປັ້ນ, ຄວັດ ຫຼື ແກະສະຫຼັກ ເພື່ອບົ່ງບອກ ຊື່ ແລະ ຈຸດທີ່ຕັ້ງ ຂອງສະຖານີລົດໄຟ.

**ມາດຕາ 3 ຫຼັກການອອກປ້າຍສະຖານີລົດໄຟ**

ການອອກປ້າຍສະຖານີລົດໄຟ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ກົດໝາຍ, ມູນເຊື້ອວັດທະນາທຳ, ຮີດຄອງປະເພນີອັນດີງາມຂອງຊາດ;
2. ຮັບປະກັນຕອບສະໜອງເນື້ອໃນ ຄວາມຮູ້, ຂໍ້ມູນ ຂ່າວສານ, ການບໍລິການທີ່ເປັນປະໂຫຍດໃຫ້ແກ່ສັງຄົມ ໃນການ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;
3. ຮັບປະກັນ ຄວາມເປັນຈິງ, ມີເນື້ອໃນ, ຮູບແບບ, ສີສັນ ແລະ ນຳໃຊ້ພາສາ ໃຫ້ຖືກຕ້ອງ;

4. ຮັບປະກັນຄວາມຖືກຕ້ອງຂອງ ຊື່ສະຖານີ, ມາດຕະຖານເຕັກນິກ ໂຄງສ້າງປ້າຍ, ການຕິດຕັ້ງ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປົກປັກຮັກສາສິ່ງແວດລ້ອມ ແລະ ຄວາມສວຍງາມ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ເຄື່ອນໄຫວ ກ່ຽວກັບ ການຜະລິດ ແລະ ຕິດຕັ້ງ ປ້າຍສະຖານີລົດໄຟ ຢູ່ ສປປ ລາວ.

## ໝວດທີ 2
## ສະຖານີລົດໄຟ

**ມາດຕາ 5 ສະຖານີລົດໄຟ**

ສະຖານີລົດໄຟ (RAILWAY STATION) ແມ່ນ ສະຖານທີ່ຮັບສົ່ງ ຜູ້ໂດຍສານ ແລະ ສິນຄ້າ ປະກອບດ້ວຍສິ່ງອຳນວຍຄວາມສະດວກໃຫ້ແກ່ການບໍລິການຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ, ຊຶ່ງມີ ຫົວໜ້າສະຖານີເປັນຜູ້ຄວບຄຸມ ແລະ ອະນຸຍາດໃຫ້ລົດໄຟແລ່ນເຂົ້າ-ອອກ ຕາມລະບຽບການແລ່ນລົດໄຟ.

ສະຖານີລົດໄຟ ມີ ສອງ ຮູບແບບ ດັ່ງນີ້:

1. ສະຖານີລົດໄຟສາກົນ;
2. ສະຖານີລົດໄຟທົ່ວໄປ.

**ມາດຕາ 6 ສະຖານີລົດໄຟສາກົນ**

ສະຖານີລົດໄຟສາກົນ (INTERNATIONAL RAILWAY STATION) ແມ່ນ ສະຖານທີ່ຕັ້ງຢູ່ຊາຍແດນ ລະຫວ່າງປະເທດ ເພື່ອຮັບສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທາງລົດໄຟ, ຊຶ່ງມີ ລະບົບຄຸ້ມຄອງພາສີ, ຕຳຫຼວດກວດຄົນເຂົ້າ ອອກເມືອງ, ກັກກັນພືດ ແລະ ສັດ ໂດຍມີຫົວໜ້າສະຖານີເປັນຜູ້ ຄວບຄຸມ ແລະ ອະນຸຍາດໃຫ້ລົດ ໄຟແລ່ນເຂົ້າອອກ ຕາມລະບຽບການແລ່ນລົດໄຟ. ຕົວຢ່າງ: ສະຖານີລົດໄຟສາກົນບໍ່ເຕັນ (BOTEN INTERNATIONAL RAILWAY STATION).

**ມາດຕາ 7 ສະຖານີລົດໄຟທົ່ວໄປ**

ສະຖານີລົດໄຟທົ່ວໄປ (RAILWAY STATION) ແມ່ນ ສະຖານທີ່ຮັບສົ່ງ ຜູ້ໂດຍສານ ແລະ ສິນຄ້າທາງລົດໄຟ, ຊຶ່ງມີຫົວໜ້າສະຖານີເປັນຜູ້ ຄວບຄຸມ ແລະ ອະນຸຍາດ ໃຫ້ລົດໄຟແລ່ນເຂົ້າອອກຕາມລະບຽບການແລ່ນລົດໄຟ ແລະ ບໍ່ນອນຢູ່ໃນກໍລະນີ ມາດຕາ 6 ສະຖານີລົດໄຟສາກົນ. ຕົວຢ່າງ: ສະຖານີລົດໄຟຫຼວງພະບາງ (LUANGPRABANG RAILWAY STATION).

**ມາດຕາ 8 ປະເພດສະຖານີລົດໄຟ**

ສະຖານີລົດໄຟ ມີ ສອງ ປະເພດ ດັ່ງນີ້:

1. ສະຖານີລົດໄຟຂົນສົ່ງຜູ້ໂດຍສານ;
2. ສະຖານີລົດໄຟຂົນສົ່ງສິນຄ້າ.

**ມາດຕາ 9 ສະຖານີລົດໄຟຂົນສົ່ງຜູ້ໂດຍສານ**

ສະຖານີລົດໄຟຂົນສົ່ງຜູ້ໂດຍສານ (PASSENGER RAILWAY STATION) ແມ່ນ ສະຖານີທີ່ຮັບສົ່ງສະເພາະຜູ້ໂດຍສານທາງລົດໄຟ, ຊຶ່ງປະກອບດ້ວຍ ສະຖານທີ່ ຈອດ, ພັກ, ຕໍ່ພວງ, ສັບປ່ຽນຂະບວນລົດໄຟ, ຮັບສົ່ງຜູ້ໂດຍສານ, ຫຼີກ, ຜ່ານ, ແທ່ນຂຶ້ນລົງ, ຈັດຕູ້ໂດຍສານ, ຫ້ອງມ້ຽນອຸປະກອນ, ຫ້ອງບັນຊາຄວບຄຸມ ແລະ ກວດກາເຕັກນິກ, ຫ້ອງການ, ລະບົບບໍລິການຂ່າວສານ, ຫ້ອງລໍຖ້າຜູ້ໂດຍສານ, ສະຖານທີ່ບໍລິການ,

ຫ້ອງຂາຍປີ້, ເດີ່ນ, ລານຈອດລົດ, ທາງເຂົ້າຫາສະຖານີ, ສາງ ແລະ ສິ່ງອໍານວຍຄວາມສະດວກ ສໍາລັບ ຜູ້ໂດຍສານທີ່ເປັນຄົນພິການ ແລະ ອື່ນໆ. ຕົວຢ່າງ: ສະຖານີລົດໄຟນະຄອນຫຼວງວຽງຈັນ (VIENTIANE RAILWAY STATION).

**ມາດຕາ 10 ສະຖານີລົດໄຟຂົນສົ່ງສິນຄ້າ**

ສະຖານີລົດໄຟຂົນສົ່ງສິນຄ້າ (FREIGHT RAILWAY STATION) ແມ່ນ ສະຖານີທີ່ຮັບສົ່ງສະເພາະສິນຄ້າທາງລົດໄຟ, ຊຶ່ງປະກອບດ້ວຍສະຖານທີ່ ຈອດ, ພັກ, ສັບປ່ຽນ, ຫຼີກ, ຜ່ານຂະບວນລົດໄຟ, ຈັດວາງຕູ້ສິນຄ້າ, ບັນຈຸ, ຄ່ຽນຖ່າຍ, ຮັບສົ່ງ, ເກັບຮັກສາສິນຄ້າ, ກວດກາເຕັກນິກ, ຫ້ອງການ, ລະບົບບໍລິການຂໍ້ມູນຂ່າວສານ, ເດີ່ນ, ລານຈອດລົດ, ທາງເຂົ້າຫາສະຖານີ, ສາງສິນຄ້າ, ລານວາງຕູ້ສິນຄ້າ, ຫ້ອງບັນຊາຄວບຄຸມ ແລະ ຫ້ອງເກັບມ້ຽນອຸປະກອນ. ຕົວຢ່າງ: ສະຖານີຂົນສົ່ງສິນຄ້າທາງລົດໄຟວຽງຈັນໃຕ້ (SOUTH VIENTIANE FREIGHT RAILWAY STATION).

## ໝວດທີ 3
## ຊະນິດປ້າຍສະຖານີລົດໄຟ

**ມາດຕາ 11 ຊະນິດປ້າຍສະຖານີລົດໄຟ**

ປ້າຍສະຖານີລົດໄຟ ມີ ສອງ ຊະນິດ ດັ່ງນີ້:

1. ປ້າຍ ຂຽນ, ຄວັດ ຫຼື ແກະສະຫຼັກ;
2. ປ້າຍເອເລັກໂຕຣນິກ.

**ມາດຕາ 12 ປ້າຍ ຂຽນ, ຄວັດ ຫຼື ແກະສະຫຼັກ**

ປ້າຍ ຂຽນ, ຄວັດ ຫຼື ແກະສະຫຼັກ ແມ່ນ ປ້າຍທີ່ໄດ້ຜ່ານຂະບວນການໃຊ້ວັດຖຸປະກອນເຕັກນິກສະເພາະດ້ານວິຈິດສິນມາ ຂຽນ, ຄວັດ ຫຼື ແກະສະຫຼັກ ໃສ່ ໄມ້, ຫີນອ່ອນ ແລະ ວັດຖຸອື່ນ ເປັນ ຕົວໜັງສື ແລະ ເຄື່ອງໝາຍ.

**ມາດຕາ 13 ປ້າຍເອເລັກໂຕຣນິກ**

ປ້າຍເອເລັກໂຕຣນິກ ແມ່ນ ປ້າຍທີ່ນໍາໃຊ້ໄຟຟ້າເຂົ້າໃນການຕິດຕັ້ງ ໃນຮູບແບບ ຈໍພາບ, ຕູ້ໄຟຟ້າ, ລະບົບຄອມພິວເຕີທີ່ມີແສງສີ ໂດຍມີພາບ ເຄື່ອນໄຫວ ຫຼື ບໍ່ເຄື່ອນໄຫວ ທີ່ບັນຈຸຂໍ້ມູນຂ່າວສານ ເປັນ ຕົວໜັງສື ແລະ ເຄື່ອງໝາຍ.

## ໝວດທີ 4
## ຊື່, ເນື້ອໃນ, ສີພື້ນ, ຕົວໜັງສື, ຄວາມຮຸ່ງແຈ້ງ ແລະ ຂະໜາດ ຂອງປ້າຍສະຖານີລົດໄຟ

**ມາດຕາ 14 ຊື່ສະຖານີລົດໄຟ**

ຊື່ສະຖານີລົດໄຟແຕ່ລະປະເພດຕ້ອງບົ່ງບອກເຖິງຈຸດທີ່ຕັ້ງ ເປັນຕົ້ນ ຊື່ ບ້ານ, ເມືອງ, ແຂວງ, ນະຄອນຫຼວງ ຫຼື ເປັນການລະນຶກເຖິງຄຸນງາມຄວາມດີຂອງ ການນໍາ, ວິລະຊົນ, ນັກສິນລະປິນແຫ່ງຊາດ ແລະ ແຫຼ່ງປະຫວັດສາດ-ວັດທະນະທໍາຂອງຊາດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ.

ສໍາລັບ ຊື່ສະຖານີລົດໄຟ ທີ່ມີ ສອງ ພາສາຂຶ້ນໄປ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 15 ຫຼັກການຕັ້ງຊື່ສະຖານີລົດໄຟ**

ການຕັ້ງຊື່ສະຖານີລົດໄຟ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສະຖານີລົດໄຟສາກົນ ໃຫ້ປະຕິບັດການຕັ້ງຊື່ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;

2. ສະຖານີລົດໄຟທົ່ວໄປ ໃຫ້ປະຕິບັດການຕັ້ງຊື່ ດັ່ງນີ້:

- ສະຖານີລົດໄຟ ທີ່ມີການຂົນສົ່ງສະເພາະແຕ່ຜູ້ໂດຍສານ ຫຼື ມີການຂົນສົ່ງສິນຄ້າຢູ່ຮ່ວມກັນ ໃຫ້ໃສ່ຊື່ວ່າ ສະຖານີລົດໄຟ (RAILWAY STATION). ຕົວຢ່າງ: ສະຖານີວັງວຽງ (VANGVIENG RAILWAY STATION);
- ໃນກໍລະນີ ສະຖານີລົດໄຟ ມີການຂົນສົ່ງສະເພາະສິນຄ້າ ແລະ ບໍ່ມີການຂົນສົ່ງຜູ້ໂດຍສານຢູ່ຮ່ວມກັນ ໃຫ້ໃສ່ຊື່ວ່າ ສະຖານີລົດໄຟຂົນສົ່ງສິນຄ້າ (FREIGHT RAILWAY STATION). ຕົວຢ່າງ: ສະຖານີລົດໄຟຂົນສົ່ງສິນຄ້າວຽງຈັນໃຕ້ (SOUTH VIENTIANE FREIGHT RAILWAY STATION).

**ມາດຕາ 16 ເນື້ອໃນຂອງປ້າຍສະຖານີລົດໄຟ**

ປ້າຍສະຖານີລົດໄຟທຸກຊະນິດ ຢູ່ ສປປ ລາວ ຕ້ອງເປັນພາສາລາວ, ມີເນື້ອໃນທີ່ ຖືກຕ້ອງ ແລະ ຊັດເຈນ, ສຳລັບ ປ້າຍທີ່ມີພາສາຕ່າງປະເທດ ຕ້ອງໃສ່ ພາສາລາວ ຢູ່ເທິງ ແລະ ພາສາຕ່າງປະເທດ ຢູ່ລຸ່ມ, ຂະໜາດຂອງຕົວໜັງສືບໍ່ໃຫ້ໃຫຍ່ເກີນ ສອງສ່ວນສາມ ຂອງຕົວໜັງສືລາວ.

**ມາດຕາ 17 ສີພື້ນ ແລະ ຕົວໜັງສື ຂອງປ້າຍສະຖານີລົດໄຟ**

ສີພື້ນ ແລະ ຕົວອັກສອນ ຂອງປ້າຍສະຖານີລົດໄຟທຸກຊະນິດ ຕ້ອງເປັນສີທີ່ຕັດກັນ ເພື່ອສະດວກໃນການແນມເຫັນ.

**ມາດຕາ 18 ຄວາມຮຸ່ງແຈ້ງຂອງປ້າຍສະຖານີລົດໄຟ**

ປ້າຍສະຖານີລົດໄຟ ຕ້ອງຮັບປະກັນ ຄວາມຮຸ່ງແຈ້ງ, ຊັດເຈນ ຕະຫຼອດໄລຍະເວລາການໃຊ້ງານ ບໍ່ມີຜົນກະທົບຕໍ່ສາຍຕາ ແລະ ການແລ່ນລົດໄຟ.

**ມາດຕາ 19 ຂະໜາດຂອງປ້າຍສະຖານີລົດໄຟ**

ຂະໜາດຂອງປ້າຍສະຖານີລົດໄຟ ຕ້ອງສົມສ່ວນກັບເນື້ອໃນຂອງປ້າຍ, ມີຄວາມເໝາະສົມກັບສະຖານທີ່ຕິດຕັ້ງປ້າຍ ແລະ ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ເປັນອຸປະສັກຕໍ່ການແລ່ນລົດໄຟ.

## ໝວດທີ 5
## ການອະນຸຍາດອອກປ້າຍສະຖານີລົດໄຟ

**ມາດຕາ 20 ການຂໍອະນຸຍາດອອກປ້າຍສະຖານີລົດໄຟ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂໍອະນຸຍາດອອກປ້າຍສະຖານີລົດໄຟ ຕ້ອງຍື່ນຄຳຮ້ອງທີ່ປະກອບດ້ວຍ ຊື່ສະຖານີ, ຮູບແບບຂອງຕົວໜັງສື, ຂະໜາດ ແລະ ເອກະສານທີ່ກ່ຽວຂ້ອງ ຕໍ່ ກົມທາງລົດໄຟ, ກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 21 ເອກະສານການຂໍອະນຸຍາດອອກປ້າຍສະຖານີລົດໄຟ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂໍອະນຸຍາດອອກປ້າຍສະຖານີລົດໄຟ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບສະເໜີຂໍອະນຸຍາດອອກປ້າຍສະຖານີລົດໄຟ;

2. ສັນຍາໂຄງການ ຫຼື ສັນຍາສຳປະທານ;

3. ສະຖານທີ່ຕິດຕັ້ງປ້າຍ;

4. ແຜ່ນແຕ້ມເຕັກນິກຂອງປ້າຍສະຖານີລົດໄຟ.

**ມາດຕາ 22 ການພິຈາລະນາອອກປ້າຍສະຖານີລົດໄຟ**

ກົມທາງລົດໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກວດກາ ເນື້ອໃນ, ຮູບແບບ, ຂະໜາດ ແລະ ເອກະສານທີ່ກ່ຽວຂ້ອງ ຂອງປ້າຍສະຖານີລົດໄຟ ເພື່ອພິຈາລະນາອອກປ້າຍສະຖານີລົດໄຟ ພາຍໃນ ສິບຫ້າວັນ ລັດຖະການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 23 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຕິດຕັ້ງປ້າຍສະຖານີລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຕໍ່ເຕີມ ແລະ ດັດແປງ ປ້າຍ ຫຼື ຊື່ ສະຖານີລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດ;

3. ມ້າງເພ, ທຳລາຍ ຫຼື ສ້າງຄວາມເສຍຫາຍ ໃຫ້ແກ່ປ້າຍສະຖານີລົດໄຟ;

4. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ແລະ ບໍ່ໃຫ້ການຮ່ວມມື ໃນການກວດກາຂອງ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 24 ຂໍ້ຫ້າມສຳລັບຜູ້ໄດ້ຮັບອະນຸຍາດອອກປ້າຍສະຖານີລົດໄຟ**

ຫ້າມ ຜູ້ໄດ້ຮັບອະນຸຍາດອອກປ້າຍສະຖານີລົດໄຟ ມີພຶດຕິກຳ ດັ່ງນີ້:

1. ສັບປ່ຽນຕົວອັກສອນຂອງຊື່ສະຖານີລົດໄຟ;

2. ຕໍ່ເຕີມ ແລະ ດັດແປງ ປ້າຍ ຫຼື ຊື່ ສະຖານີລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຕິດຕັ້ງ ປ້າຍສະຖານີລົດໄຟ ໂດຍ ບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມການອະນຸຍາດ ຂອງກົມທາງລົດໄຟ;

4. ສົມຮູ້ຮ່ວມຄິດ, ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ ໃນການອະນຸຍາດອອກປ້າຍສະຖານີລົດໄຟ;

5. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ແລະ ບໍ່ໃຫ້ການຮ່ວມມື ໃນການກວດກາຂອງ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງ ມີພຶດຕິກຳ ດັ່ງຕໍ່ໄປນີ້:

1. ປະລະ, ເມີນເສີຍ ຕໍ່ ໜ້າທີ່ຮັບຜິດຊອບຂອງຕົນ;

2. ຮັບສິນບົນ, ສວຍໃຊ້ ສິດອຳນາດ ແລະ ໜ້າທີ່ຕຳແໜ່ງ ເພື່ອຊອກຫາຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;

3. ປອມແປງເອກະສານ ກ່ຽວກັບການອະນຸຍາດອອກປ້າຍສະຖານີລົດໄຟ;

4. ປິດບັງ ແລະ ບິດເບືອນ ຂໍ້ມູນ ກ່ຽວກັບປ້າຍສະຖານີລົດໄຟ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ວຽກງານປ້າຍສະຖານີລົດໄຟ

**ມາດຕາ 26 ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ້າຍສະຖານີລົດໄຟ**

ກົມທາງລົດໄຟ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານປ້າຍສະຖານີລົດໄຟ ຕາມ ສິດ ແລະ ໜ້າທີ່ ຂອງຕົນ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງກົມທາງລົດໄຟ**

ກົມທາງລົດໄຟ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້ານິຕິກຳ ກ່ຽວກັບປ້າຍສະຖານີລົດໄຟ;
2. ກວດກາຄວາມຖືກຕ້ອງຂອງ ຊື່, ເນື້ອໃນ, ສີພື້ນ, ຕົວໜັງສື, ຄວາມຮຸ່ງແຈ້ງ ແລະ ຂະໜາດ ຂອງ ປ້າຍສະຖານີລົດໄຟ;
3. ອອກອະນຸຍາດປ້າຍສະຖານີລົດໄຟ;
4. ໂຈະ ຫຼື ຖອນ ປ້າຍສະຖານີລົດໄຟ;
5. ສະຫຼຸບ ແລະ ສັງລວມ ຂໍ້ມູນສະຖິຕິຂອງປ້າຍສະຖານີລົດໄຟ ແລ້ວລາຍງານໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນແຕ່ລະໄລຍະ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 28 ເນື້ອໃນການກວດກາ**

ການກວດກາວຽກງານປ້າຍສະຖານີລົດໄຟ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດລະບຽບການ ກ່ຽວກັບວຽກງານປ້າຍສະຖານີລົດໄຟ;
2. ກວດກາມາດຕະຖານເຕັກນິກຂອງປ້າຍສະຖານີລົດໄຟ;
3. ກວດກາການປະຕິບັດ ສິດ ແລະ ໜ້າທີ່ ຂອງ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ.

**ມາດຕາ 29 ຮູບການກວດກາ**

ການກວດກາວຽກງານ ປ້າຍສະຖານີລົດໄຟ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາເປັນປົກກະຕິ ຊຶ່ງແມ່ນການກວດກາ ທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກ ກວດກາຮູ້ກ່ອນລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມທາງລົດໄຟ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ງາມປະສົງ ເມືອງມະນີ